# ຄວາມຈິງຕໍ່ມວນຊົນ

Ottawa County Health Department

## ແອບຣິນ (ABRIN)

### ແອບຣິນ ຄືຫຍັງ?

ແອບຣິນ ເປັນຢາພິດທຳມະຊາດທີ່ມີໃນເມັດພືດຂອງຕົ້ນໄມ້ທີ່ເອີ້ນວ່າ "ໂຣສະຣີ ພີ" ຫລື "ເຈຄວີຣີທີ ພີ". ແອບຣິນ ຄ້າຍໆກັນກັບ ໄຣສິນ; ແຕ່, ແອບຣິນ ມີພິດແຮງກວ່າ. ແອບຣິນ ສາມາດເຮັດຂື້ນຊະນິດແບບເປັນແປ້ງ, ເປັນອາຍ, ເປັນເມັດນ້ອຍໆ, ຫລື ເປັນຊະນິດທີ່ລະລາຍໃນນ້ຳໄດ້. ແອບຣິນ ຊະນິດທີ່ເປັນແປ້ງມີສີອອກເຫລືອງອອກຂາວ.

### ມີທາງໃດແດ່ທີ່ອາດຈະຕິດແທດກັບ ແອບຣິນ?

ຜູ້ທີ່ຈະເອົາ ແອບຣິນ ຈາກເມັດພືດ ໂຣສະຣີ ພີ ຕ້ອງມີຄວາມຕັ້ງໃຈທີ່ຈະໃຊ້ເປັນພິດຕໍ່ຄົນ. ການທີ່ຈະຕິດແທດກັບ ແອບຣິນ ໂດຍບັງເອີນນັ້ນເປັນໄປບໍ່ໄດ້.

- ຫາຍໃຈເອົາ ແອບຣິນ ທີ່ເປັນອາຍ ຫລື ເປັນແປ້ງ
- ແຕະຕ້ອງບ່ອນທີ່ມີ ແອບຣິນ ປົນຢູ່ນຳ
- ກິນ ຫລື ດື່ມ ແອບຣິນ

ພິດຂອງ ແອບຣິນ ຕິດຕໍ່ກັນບໍ່ໄດ້ ແລະ ມັນບໍ່ສາມາດແຜ່ລາມຈາກຄົນນີ້ຫາຄົນນັ້ນ.

### ມີອາການໃດແດ່ເນື່ອງມາຈາກການຕິດແທດກັບ ແອບຣິນ?

ເຂົ້າທາງການຫາຍໃຈ:

- ຫາຍໃຈຍາກ
- ຄີງຮ້ອນ
- ໄອ
- ປຸ້ນທ້ອງປວດຮາກ
- ແໜ້ນເອິກ

ເຂົ້າທາງປາກ:

- ຮາກ
- ລົງທ້ອງ
- ຂາດນ້ຳໃນຮ່າງກາຍຢ່າງໜັກ
- ເລືອດດັນສູງ
- ອາດຕາຍ

### ຈະຮູ້ໄດ້ແນວໃດວ່າແມ່ນ ແອບຣິນ?

ແອບຣິນຊະນິດທີ່ແປ້ງມີສີອອກເຫລືອງອອກຂາວ.

### ຈະຮັກສາຈາກການຕິດແທດກັບ ແອບຣິນ ດ້ວຍວິທີໃດ?

ຫາກທ່ານຖືກຕິດແທດກັບ ແອບຣິນ ໃຫ້ໄປຫາທ່ານໝໍສຸກເສີນທັນທີ.
ການຮັກສາພິດຈາກ ແອບຣິນ ຕ້ອງໃຫ້ຜູ້ຖືກພິດຢູ່ໃນການດູແລຂອງໝໍເພື່ອຈະເຮັດໃຫ້ພິດອ່ອນລົງໄດ້. ວິທີທີ່ຈະຮັກສາຄົນຖືກພິດນັ້ນຂື້ນຢູ່ກັບວິທີທີ່ຄົນຖືກພິດ.

### ສຳລັບລາຍລະອຽດເພີ່ມເຕີມກ່ຽວກັບ ແອບຣິນ ໃຫ້ຕິດຕໍ່ໄປທີ່:

Ottawa County Health Department
www.miOttawa.org

Center for Disease Control and Prevention
www.bt.cdc.gov/agent/abrin/
ໂທຣະສັບ: (888) 246-2675

12251 James St., Suite 400
Holland, MI  49424

ເລກໂທຣະສັບ: (616) 396-5266
ເລກແຟັກ: (616) 393-5643

ແວບໄຊ: www.miOttawa.org